## ມິຊຊາອາທິດທີ 32 ກຳມະດາ ປີ B
## ວັນທີ 7 ພະຈິກ 2021



**ພຣະວໍລະສານໂດຍນັກບຸນມາໂກ 12, 38-44**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງສັ່ງສອນວ່າ: "ພວກເຈົ້າຈົ່ງລະວັງພວກນັກກົດໝາຍມັກໃສ່ເສື້ອລ່າມອອກທ່ຽວ, ມັກໃຫ້ຄົນສຳແດງຄວາມເຄົາລົບ ຢູ່ໃນສາທາລະນະ, ມັກນັ່ງແຖວທີ່ໜຶ່ງໃນໂຮງທຳ ແລະໃນງານກິນລ້ຽງມັກຫານັ່ງແຕ່ບ່ອນມີກຽດ. ເຂົາມັກຂູດຂີດເຮືອນພວກນາງໝ້າຍແລະມັກຊອບພາວະນາຍືດຍາວ. ພວກເຂົາຈະຕ້ອງຖືກລົງໂທດຢ່າງໜັກກ່ວາຜູ້ອື່ນ".

ໃນເວລາ ພຣະເຢຊູເຈົ້າຊົງປະທັບຢູ່ຫ້ອງພະຄັງນັ້ນ ພຣະອົງທອດພຣະເນດເຫັນຝູງຊົນມາປ່ອນເງິນໃສ່ຕູ້ທານ. ພວກຮັ່ງມີກໍປ່ອນໃສ່ຢ່າງຫລວງຫລາຍ. ມີນາງໝ້າຍທຸກຈົນຜູ້ໜຶ່ງທານສອງອັດອັນມີຄ່າເທົ່າກັບໜຶ່ງໄພ. ພຣະເຢຊູເຈົ້າຈຶ່ງຮຽກພວກສາວົກເຂົ້າມາກ່າວວ່າ: "ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ນາງໝ້າຍທຸກຈົນຜູ້ນີ້ໄດ້ໃຫ້ທານຫລາຍກ່ວາໝົດທຸກຄົນ. ຍ້ອນວ່າຄົນທັງຫລາຍໄດ້ເອົາຂອງເຫລືອໃຊ້ມາທານ; ສ່ວນນາງໝ້າຍນີ້ເປັນຄົນຂາດເຂີນ, ນາງໄດ້ເອົາເງິນທີ່ນາງມີຢູ່ທັງໝົດພໍລ້ຽງຊີວິດຂອງນາງມາທານ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ບົດອ່ານທີໜຶ່ງແລະພຣະວໍລະສານວັນນີ້ກໍລ້ວນແຕ່ກ່າວເຖິງການໃຫ້ທານຂອງນາງໝ້າຍ. ໃນບົດອ່ານທີໜຶ່ງ, ນາງໝ້າຍຢູ່ເມືອງຊາແຣັບຕາໄດ້ທານໃຫ້ປະພາສົກເອລີສິ່ງທີ່ນາງມີເພື່ອລ້ຽງຊີວິດຂອງນາງແລະລູກຂອງນາງກ່ອນທີ່ທັງສອງຈະຕາຍ ອັນແມ່ນຄາບເຂົ້າສຸດທ້າຍນັ້ນເອງ. ແຕ່ການໃຫ້ທານຂອງນາງໝ້າຍນີ້ບໍ່ພຽງແຕ່ສາມາດຊ່ວຍຊີວິດຂອງປະພາສົກເອລີໄວ້ເທົ່ານັ້ນ ແຕ່ຍັງສາມາດຊ່ວຍຊີວິດຂອງນາງແລະລູກຂອງນາງອີກດ້ວຍ. ດ້ວຍວ່າ, ແຕ່ນີ້ໄປແອ່ງໃສ່ແປ້ງແລະໄຫນໍ້າມັນຂອງນາງຈະບໍ່ບົກເຫືອດແຫ້ງອີກເລີຍ. ໝາຍວ່ານາງແລະລູກຂອງນາງຈະມີຊີວິດທີ່ອຸດົມສົມບູນແລະຍືນຍາວ.

ສ່ວນນາງໝ້າຍໃນພຣະວໍລະສານວັນນີ້ກໍເຊັ່ນດຽວກັນ. ນາງກໍໄດ້ທານຊັບສິນທີ່ນາງມີເພື່ອລ້ຽງຊີວິດໃຫ້ພຣະເຈົ້າໂດຍບໍ່ເສຍດາຍ. ສິ່ງທີ່ນາງໝ້າຍທັງສອງກະທຳນີ້ບໍ່ແມ່ນແຕ່ການໃຫ້ທານເຂົ້າປາອາຫານແລະຊັບສິນທີ່ນາງມີເທົ່ານັ້ນ, ແຕ່ແມ່ນນາງໄດ້ທານຊີວິດຂອງນາງເອງໃຫ້ພຣະເຈົ້າແລະໃຫ້ຄົນອື່ນ. ເພາະນາງໝ້າຍໃນບົດອ່ານທີໜຶ່ງກໍໃຫ້ທານຄາບເຂົ້າສຸດທ້າຍຂອງນາງແລະລູກຂອງນາງກ່ອນທີ່ທັງສອງຈະຕາຍ. ສ່ວນນາງໝ້າຍໃນພຣະວໍລະສານກໍໃຫ້ທານຊັບສິນທີ່ນາງມີເພື່ອລ້ຽງຊີວິດຂອງນາງ. ການກະທຳຂອງນາງໝ້າຍທັງສອງນີ້ສະທ້ອນໃຫ້ເຫັນເຖິງຮູບພາບຂອງພຣະເຢຊູເຈົ້າທີ່ໃຫ້ທານແມ່ນແຕ່ຊີວິດຂອງພຣະອົງເອງເພື່ອເປັນເຄື່ອງບູຊາຍັນໄຖ່ບາບພວກເຮົາ; ຍ້ອນຫຍັງ? ຍ້ອນຄວາມຮັກທີ່ພຣະອົງຊົງມີຕໍ່ພວກເຮົານັ້ນເອງ. ເພາະບໍ່ມີຄວາມຮັກໃດຍິ່ງໃຫຍ່ເທົ່າການສະລະຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ. ອາໄສການຕາຍເທື່ອດຽວຂອງພຣະເຢຊູເຈົ້າບົນໄມ້ກາງເຂນ, ມະນຸດຈຶ່ງສາມາດຫວິດພົ້ນຈາກຄວາມຕາຍນິລັນດອນ.

ສ່ວນພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າເດ. ພວກເຮົາໄດ້ມີຄວາມຮັກເມດຕາຕໍ່ຄົນອື່ນບໍ? ພວກເຮົາຮູ້ຈັກແບ່ງປັນສິ່ງທີ່ພວກເຮົາມີໃຫ້ຄົນທີ່ຂາດເຂີນບໍ? ຫລືພວກເຮົາໃຫ້ທານແຕ່ສິ່ງທີ່ເຫລືອໃຊ້ຂອງພວກເຮົາເທົ່ານັ້ນ? ບາງຄັ້ງການໃຫ້ທານຂອງພວກເຮົາອາດເປັນການສ້າງພາບເພື່ອໃຫ້ຄົນອື່ນເຫັນແລະຍ້ອງຍໍສັນລະເສີນພວກເຮົາ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຜັນປັ້ນດວງໃຈທີ່ເຫັນແກ່ຕົວແລະຄັບແຄບຂອງລູກໃຫ້ເປັນດວງໃຈທີ່ເຕັມດ້ວຍຄວາມຮັກເມດຕາເໝືອນກັບພຣະອົງ. ເພື່ອລູກຈະໄດ້ຮູ້ຈັກໃຫ້ທານແລະຊ່ວຍເຫລືອຄົນອື່ນດ້ວຍຄວາມຮັກ ເໝືອນກັບພຣະອົງໄດ້ຊ່ວຍເຫລືອແລະໃຫ້ທານຊີວິດຂອງພຣະອົງເອງໃຫ້ລູການັ້ນແລ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ